**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງການຕ່າງປະເທດ

ຫ້ອງການ

ເລກທີ: 777 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 04 FEB 2026

# ຫນັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ການບໍລິການຮັກສາຄວາມປອດໄພ ຕຶກ, ສໍານັກງານ, ຫ້ອງການ.

**ເລື່ອງ:** ເຊີນເຂົ້າຮ່ວມແຂ່ງຂັນປະມູນເປີດກວ້າງ ສໍາລັບການສະໜອງ ການບໍລິການຮັກສາຄວາມປອດໄພ ຕຶກສໍານັກງານ, ຫ້ອງການ ໃຫ້ແກ່ ກະຊວງການຕ່າງປະເທດ ປະຈໍາປີ 2026

ຫ້ອງການ ກະຊວງການຕ່າງປະເທດ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະ ໜອງການບໍລິການ ຮັກສາຄວາມປອດໄພ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນເພື່ອສະໜອງການບໍລິການ ຮັກສາຄວາມປອດໄພ ຕຶກ, ສໍານັກງານ, ຫ້ອງການ ໃຫ້ແກ່ ກະຊວງການຕ່າງປະເທດ ປະຈໍາປີ 2026, ເຊິ່ງມີລາຍລະອຽດ ດັ່ງນີ້:

1. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້–ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ **30/ສພຊ**, ລົງວັນທີ **2** ພະຈິກ **2017** ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້–ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
2. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆ ບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນທີ່ດໍາເນີນທຸລະກິດຢູ່ໃນນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວເສຍອາກອນ ແລະ ມີໃບຢັ້ງຢືນການປະຕິບັດພັນທະພາສີອາກອນ ຖືກຕ້ອງຕາມກົດໝາຍ.
3. ບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ການບໍລິການຮັກສາຄວາມປອດໄພ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາເອກະສານປະມູນຄົບຊຸດໄດ້ ທີ່ ພະແນກບໍລິຫານ, ຫ້ອງການ ກະຊວງການຕ່າງປະເທດ (ໂທລະສັບ 021 416572, 020 55611534), ເຊິ່ງມີສໍານັກງານຕັ້ງຢູ່ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງໄຊເຊດຖາ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-11:00 ໂມງ ແລະ 13:00-16:00 ໂມງ, ເລີ່ມຂາຍຊອງປະມູນ ວັນທີ 11 ກຸມພາ 2026, ລາຄາຊອງປະມູນ 1,000,000 ກີບ (ໜຶ່ງລ້ານກີບ), ຈໍານວນເງິນດັ່ງກ່າວຈະບໍ່ໄດ້ສົ່ງຄືນ, ວິທີການຊໍາລະເງິນຕ້ອງຈ່າຍເປັນເງິນສົດ.

4. ກຳນົດສົ່ງຊອງປະມູນຕ້ອງໃຫ້ສົ່ງ ພະແນກບໍລິຫານ, ຫ້ອງການ ກະຊວງການຕ່າງປະເທດ ກ່ອນເວລາ 16:00 ໂມງ ຂອງວັນທີ 24 ກຸມພາ 2026, ຖ້າຊອງປະມູນໃດສົ່ງຊ້າກ່ອນກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງປະມູນ.
5. ກຳນົດເປີດຊອງປະມູນແມ່ນວັນທີ 25 ກຸມພາ 2026 ເວລາ 13:00 ໂມງ ທີ່ ຫ້ອງປະຊຸມຊັ້ນ 3 ຕຶກ B ຂອງກະຊວງການຕ່າງປະເທດ, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.
6. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ, ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ.

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ຕາມວັນເວລາດັ່ງກ່າວດ້ວຍ.

**ຫົວໜ້າຫ້ອງການ**

ບົວອນທັດ ດວງຈັກ